ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ

# ຄູ່ມືແນະນຳສຳລັບ
# ການປະເມີນຜົນທັນຕະແພດຝຶກຫັດງານ ໄລຍະ 1 ປີ

ຄະນະກຳມະການວິຊາຊີບທັນຕະແພດ
ນະຄອນຫຼວງວຽງຈັນ, 27 ກັນຍາ (9) 2023

## I. ບ່ອນອີງ

- ບົດແນະນໍາຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ເລກທີ 0108/ສອປ ,ລົງວັນທີ 27 ພະຈິກ (11) 2020 ;
- ຂໍ້ຕົກລົງຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ສະບັບເລກທີ 0033/ສອປ,ລົງວັນທີ 10 ກຸມພາ (2) 2023 ວ່າດ້ວຍການແຕ່ງຕັ້ງບຸກຄະລາກອນ ຂອງຄະນະກໍາມະການວິຊີບທັນຕະແພດ ;
- ຂໍ້ຕົກລົງຂອງສະພາຄຸ້ມຄອງວິຊາຊີບປິ່ນປົວວ່າດ້ວຍການຝຶກຫັດງານຂອງທັນຕະແພດຈົບໃໝ່ຈາກ 2 ປີ ມາເປັນ 1 ປີ ເລກທີ 0113/ສອປ , ລົງວັນທີ 25 ສິງຫາ (8) 2023 ;
- ແຈ້ງຜົນການສອບເສັງລະດັບຊາດເພື່ອເອົາໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວເບື້ອງຕົ້ນດ້ານທັນຕະກໍາ.

## II. ບົດນໍາ

ຄູ່ມືສະບັບນີ້ໄດ້ເຮັດຂຶ້ນ ແລະ ແຈກຢາຍ ໃຫ້ແກ່ທັນຕະແພດຜູ້ເປັນຄູຝຶກຫຼືຜູ້ກໍາກັບການຝຶກຫັດງານ ເອີ້ນວ່າ " ຄູຄຼີນິກ " ທີ່ປະຕິ ບັດວຽກງານຢູ່ໃນ ຄະນະທັນຕະແພດສາດ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ, ໂຮງໝໍສູນກາງ, ໂຮງໝໍທີ່ຂຶ້ນກັບ ກົມເສນາຮັກ (ກະຊວງປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ), ໂຮງໝໍແຂວງ ແລະ ໂຮງໝໍຊຸມຊົນເພື່ອນໍາໃຊ້ ເຂົ້າໃນການປະເມີນຜົນທັນຕະແພດຝຶກຫັດງານ, ເປັນບ່ອນອີງໃນການຈັດຕັ້ງປະຕິບັດໜ້າວຽກຂອງຄູຝຶກທີ່ຈະຕ້ອງໄດ້ ຕິດຕາມ ທັນຕະແພດຝຶກຫັດງານ ເພື່ອເຮັດໃຫ້ການປະເມີນຜົນ ເປັນໄປຕາມເນື້ອໃນລະບຽບຂອງການລົງຝຶກຫັດງານທີ່ໄດ້ກໍານົດໄວ້ໃນຄູ່ມືສະບັບນີ້, ກະລຸນາເບິ່ງລາຍລະອຽດຂອງກິດຈະກໍາໃນການຝຶກ ຢູ່ໃນເອກະສານຊ້ອນທ້າຍແຕ່ເລກ ທີ 1 ຫາ 7.

ຈຸດປະສົງຂອງການສົ່ງທັນຕະແພດຝຶກຫັດງານລົງພາກປະຕິບັດຕົວຈິງຢູ່ ສະຖານທີ່ ບໍລິການຕ່າງໆເປັນເວລາ 1 ປີ ເພື່ອເກັບກ່ຽວປະສົບການໃຫ້ໄດ້ຕາມຂີດຄວາມສາມາດທີ່ໄດ້ກໍານົດໄວ້ , ພາຍຫຼັງສໍາເລັດການຝຶກຫັດງານ, ທັນຕະແພດຝຶກຫັດງານຈະບັນລຸຕາມເງື່ອນໄຂຂີດຄວາມສາມາດ ແລະ ໃຫ້ການປິ່ນປົວຄົນເຈັບໄດ້ຢ່າງຄ່ອງແຄ້ວ, ປອດໄພ ແລະ ມີຄຸນນະພາບໃນການປິ່ນປົວ, ຮູ້ວຽກທັນຕະກໍາຊຸມຊົນ, ວຽກງານການບໍລິການສັງຄົມອື່ນໆ,ທັກສະໃນການສື່ສານ, ມີມະນຸດສໍາພັນ ແລະ ຫຼັກການຈັນຍາບັນ ຂອງທັນຕະແພດ.

ເມື່ອສໍາເລັດການລົງຝຶກຫັດງານ ທັນຕະແພດຜູ້ເປັນຄູຄລີນິກ ຕ້ອງໄດ້ປະເມີນຄວາມສາມາດຂອງຜູ້ລົງຝຶກ ຫັດງານຕາມໜ້າວຽກໃນເອກສານຊ້ອນທ້າຍ ແຕ່ ເລກທີ 1 ຫາ 7 ແລ້ວໃຫ້ຄະແນນ.

## III. ຍຸດທະສາດວ່າດ້ວຍການອອກໃບປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນຂອງ ສປປ ລາວ

1. ສ້າງຄວາມເຂັ້ມແຂງໃຫ້ສະພາຄຸ້ມຄອງວິຊາຊີບປິ່ນປົວ.
2. ສ້າງບັນດານິຕິກຳຕ່າງໆສຳລັບການອອກໃບອະນຸຍາດປະກອບວິຊາຊີບປິ່ນປົວແລະຂຶ້ນທະບຽນ.
3. ຈັດຕັ້ງປະຕິບັດການສອບເສັງລະດັບຊາດເພື່ອຢັ້ງຢືນຂີດຄວາມສາມາດການອອກໃບປະກອບວິຊາຊີບປິ່ນປົວເບື້ອງຕົ້ນ.
4. ກຳນົດມາດຕະຖານ, ຂະບວນການສຳລັບອອກໃບປະກອບວິຊາຊີບປິ່ນປົວແລະ ການຂຶ້ນທະບຽນແຕ່ລະປະເພດ.
5. ສ້າງລະບົບການຈັດຕັ້ງປະຕິບັດການພັດທະນາວິຊາຊີບຕໍ່ເນື່ອງໃຫ້ບັນລຸມາດຕະຖານທີ່ກຳນົດໄວ້ເພື່ອຕໍ່ອາຍຸການຂຶ້ນທະບຽນ.
6. ສ້າງລະບົບການຄຸ້ມຄອງຂໍ້ມູນຂ່າວສານ ລະບົບການອອກໃບອອກໃບອະນຸຍາດເຄື່ອນໄຫວວິຊາຊີປິ່ນປົວ ແລະ ການຂຶ້ນທະບຽນ ສ້າງຄວາມເຂັ້ມແຂງໃຫ້ແກ່ການຕິດຕໍ່ສື່ສານ.




## IV. ຍຸດທະສາດສຳລັບລະບົບການອອກໃບອະນຸຍາດ ແລະ ຂຶ້ນທະບຽນຜູ້ປະກອບວິຊາຊີບປິ່ນປົວ



**ໝາຍເຫດ:**

- ຜູ້ທີ່ມີໃບອະນຸຍາດເຄື່ອນໄຫວວິຊາຊາຊີບປິ່ນປົວເບື້ອງຕົ້ນ ຕ້ອງສະໝັກເຂົ້າໃນການຝຶກຫັດງານດ້ານທັນຕະກຳ ( Dental Internship Program / DIP );
- ສຳລັບທັນຕະແພດຝຶກຫັດງານ (DIP ) ແມ່ນ 1 ປີ.

**ແປຄຳສັບ:**

**ທັນຕະແພດຝຶກຫັດງານ**: ໝາຍເຖິງທັນຕະແພດຜູ້ທີ່ໄດ້ຮັບໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວເບື້ອງຕົ້ນ ຈາກ ສະພາຄຸ້ມຄອງວິຊາຊີບປິ່ນປົວ ກະຊວງສາທາລະນະສຸກ, ພາຍຫຼັງສຳເລັດການຝຶກຫັດງານແລ້ວ ແລະ ໄດ້ຜ່ານການປະເມີນຜົນ ຈາກໜ່ວຍງານຮັບຜິດຊອບ ຈຶ່ງຈະໄດ້ຮັບໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວສົມບູນ.

## V. ຈຸດປະສົງຂອງການຝຶກຫັດງານ :

1. **ຈຸດປະສົງລວມ:**

   ເພື່ອໃຫ້ທັນຕະແພດມີປະສົບການດ້ານການບໍລິຫານ, ດ້ານຄລີນິກ, ການສົ່ງເສີມສຸຂະພາບຜົ້ງປາກ ໂດຍຜ່ານການຝຶກປະຕິບັດໃນສະຖານທີ່ບໍລິການປິ່ນປົວ ໃຫ້ໄດ້ຕາມຂີດຄວາມສາມາດທີ່ໄດ້ກຳນົດໄວ້.

2. **ຈຸດປະສົງສະເພາະ:**

   1) ຮຽນຮູ້ລະບົບຂັ້ນຕອນຂອງລະບົບບໍລິຫານຂອງວຽກງານສາທາລະນະສຸກຢູ່ສະຖານທີ່ຝຶກຫັດງານ;
   2) ການປະຕິບັດຕົວຈິງທາງດ້ານຄລີນິກ ຢູ່ສະຖານທີ່ບໍລິການປິ່ນປົວ ໃຫ້ໄດ້ຕາມແຜນທີ່ກຳກົດໄວ້;
   3) ປະຕິບັດການສົ່ງເສີມສຸຂະພາບຜົ້ງປາກ ແລະ ການສົ່ງເສີມສຸຂະພາບທົ່ວໄປ .

3. **ຄາດຄະເນຜົນໄດ້ຮັບ:**

   1) ຮູ້ລະບົບບໍລິຫານວຽກງານສາທາລະນະສຸກ, ການສົ່ງເສີມສຸຂະພາບ ແລະ ວຽກງານການບໍລິການສັງຄົມອື່ນໆ;
   2) ໃຫ້ການປິ່ນປົວຄົນເຈັບໄດ້ຢ່າງຄ່ອງແຄ້ວ, ປອດໄພ ແລະ ມີຄຸນນະພາບ ;
   3) ມີທັກສະໃນການສື່ສານ, ມີມະນຸດສຳພັນ ແລະ ຫຼັກການຈັນຍາບັນ-ຈັນຍາທຳ ຂອງທັນຕະແພດ.

## VI. ວິທີການການປະເມີນຜົນຂອງການຝຶກຫັດງານ :

ການປະເມີນຜົນຂອງການຝຶກຫັດງານແມ່ນ ອີງຕາມຄູ່ມືແນະນຳຂອງການຝຶກຫັດງານສຳລັບທັນຕະແພດທີ່ຈົບໃໝ່ (DIP) ດັ່ງລາຍລະອຽດລຸ່ມນີ້ :

1. ຂະບວນການຮຽນຮູ້ ລະບົບບໍລິຫານວຽກງານສາທາລະນະສຸກ, ການສົ່ງເສີມສຸຂະພາບ ແລະ ວຽກງານການບໍລິການສັງຄົມອື່ນໆ ( ລາຍລະອຽດຢູ່ໃນເອກະສານຊ້ອນທ້າຍ 1 );
2. ວິທະຍາສາດພື້ນຖານດ້ານທັນຕະກຳ ( ລາຍລະອຽດຢູ່ໃນເອກະສານຊ້ອນທ້າຍ 2 );
3. ທັນຕະກຳເດັກ ( ລາຍລະອຽດຢູ່ໃນເອກະສານຊ້ອນທ້າຍ 3 );
4. ທັນຕະກຳບູລະນະ ( ລາຍລະອຽດຢູ່ໃນເອກະສານຊ້ອນທ້າຍ 4 );

5. ສັນລະຍະກຳຜົ້ງປາກ ( ລາຍລະອຽດຢູ່ໃນເອກະສານຊ້ອນທ້າຍ 5 );
6. ແຂ້ວທຽມວິທະຍາ ( ລາຍລະອຽດຢູ່ໃນເອກະສານຊ້ອນທ້າຍ 6 );
7. ວຽກເສີມ: ວຽກງານການບໍລິການສັງຄົມອື່ນໆ ( ລາຍລະອຽດຢູ່ໃນເອກະສານຊ້ອນທ້າຍ 7 ).

**ໝາຍເຫດ:** ສຳລັບການປະເມີນ ຕີລາຄາຄວາມຮູ້ ຄວາມສາມາດ ຂອງທັນຕະແພດຝຶກຫັດງານ ແມ່ນຢູ່ໃນຄວາມຮັບຜິດຊອບຂອງຄູຄລີນິກ ແລະ ຜູ້ອຳນວຍການໂຮງໝໍ.

## VII. ສະຖານທີ່ຝຶກຫັດງານ:

| ລ/ດ | ໜ້າວຽກໃນການຝຶກຫັດງານ | ສະຖານທີ່ໃນການຝຶກຫັດງານ |
|---|---|---|
| 1 | ຂະບວນການຮຽນຮູ້ ລະບົບບໍລິຫານວຽກງານສາທາລະນະສຸກ, ການສົ່ງເສີມສຸຂະພາບ ແລະ ວຽກງານການບໍລິການສັງຄົມອື່ນໆ | ໂຮງໝໍສູນກາງ, ໂຮງໝໍແຂວງ ແລະ ໂຮງໝໍຊຸມຊົນ ,ໂຮງໝໍທະຫານ ແລະ ຕຳຫຼວດ. |
| 2 | ວິທະຍາສາດພື້ນຖານດ້ານທັນຕະກຳ | |
| 3 | ທັນຕະກຳເດັກ | |
| 4 | ທັນຕະກຳບູລະນະ | |
| 5 | ສັນລະຍະກຳຜົ້ງປາກ | |
| 6 | ແຂ້ວທຽມວິທະຍາ | |
| 7 | ວຽກເສີມ: ວຽກງານການບໍລິການສັງຄົມອື່ນໆ | |

❖ **ລາຍລະອຽດຂອງສະຖານທີ່ຝຶກຫັດງານ :**

ປະຈຸບັນຢູ່ໃນໂຮງໝໍສູນກາງ ມີບາງແຫ່ງໄດ້ຈັດຕັ້ງສາຍວິຊາສະເພາະ ຕາມຫຼັກສູດຂອງຄະນະທັນຕະແພດສາດ ມວສ, ບາງແຂວງແມ່ນເຮັດວຽກລວມ (ຂະແໜງ/ໜ່ວຍງານທັນຕະກຳ), ຈຶ່ງເປັນບັນຫາໃນການຈັດທັນຕະແພດຝຶກຫັດງານ ໃສ່ໄປຕາມສາຍວິຊາສະເພາະທີ່ໄດ້ຮຽນ.

1) ໂຮງໝໍສູນກາງ 6 ແຫ່ງ: ໂຮງໝໍເຊດຖາທິລາດ, ໂຮງໝໍມິດຕະພາບ, ໂຮງໝໍເດັກ, ໂຮງໝໍມະໂຫສົດ, ໂຮງໝໍ 103 ,ແລະ ໂຮງໝໍ 5 ເມສາ;
2) ພະແນກຄລີນິກທັນຕະກຳ ຄະນະທັນຕະແພດສາດ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ;
3) ນະຄອນຫຼວງວຽງຈັນມີ ໂຮງໝໍຊຸມຊົນ ( ໂຮງໝໍເມືອງ ) ມີ 9 ແຫ່ງຄື: ໂຮງໝໍເມືອງຈັນທະບູລີ, ສີສັດຕະນາກ, ໄຊເສດຖາ, ສີໂຄດຕະບອງ, ນາຊາຍທອງ, ຫາດຊາຍຟອງ, ປາກງື່ມ, ໄຊທານີ ແລະ ສັງທອງ;
4) ໂຮງໝໍແຂວງ 17 ແຫ່ງ ໃນທົ່ວປະເທດ ມີ: ແຂວງຜົ້ງສາລີ, ບໍ່ແກ້ວ, ຫຼວງນ້ຳທາ, ອຸດົມໄຊ, ຫຼວງພະບາງ, ໄຊຍະບູລີ, ຊຽງຂວາງ, ຫົວພັນ, ວຽງຈັນ, ໄຊສົມບູນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ, ອັດຕະປື ,ແລະ ໂຮງໝໍຊຸມຊົນ ຂອງ ແຂວງຕ່າງໆ;

5) ໂຮງໝໍທະຫານນະຄອນຫຼວງ, ໂຮງໝໍທະຫານ ແລະ ຕຳຫຼວດ ຂອງແຂວງໃນທົ່ວປະເທດ.

**VIII. ແຜນການຝຶກຫັດງານ ແລະ ວິທີການການປະເມີນຜົນ ທັນຕະແພດຝຶກຫັດງານໄລຍະ 1 ປີ ປະກອບດ້ວຍໜ້າວຽກດັ່ງນີ້:**

| ລ/ດ | ວິທີ | ເນື້ອໃນການເຄື່ອນໄຫວ | ການໃຫ້ຄະແນນຜ່ານ |
|---|---|---|---|
| 1 | ຂະບວນການຮຽນຮູ້ ລະບົບບໍລິຫານວຽກງານສາທາລະນະສຸກ, ການສົ່ງເສີມສຸຂະພາບ ແລະ ວຽກງານການບໍລິການສັງຄົມອື່ນໆ (ເອກະສານຊ້ອນທ້າຍ 1) | 1) ໄລຍະເວລາ: 1 ເດືອນ ;<br>2) ການສະເໜີຕົວ ຂອງທັນຕະແພດຝຶກຫັດງານ ແລະ ຮຽນຮູ້ການຈັດຕັ້ງຂອງສະຖານທີ່ຝຶກຫັດງານ, ການຈັດຕັ້ງຂອງສະຖານທີ່ໆຂຶ້ນກັບ, ແຜນການ, ເຂດຄຸ້ມຄອງ, ຈຳນວນປະຊາກອນທີ່ຄຸ້ມຄອງ;<br>3) ການສົ່ງເສີມສຸຂະພາບຜົ້ງປາກ;<br>4) ທັກສະໃນການສື່ສານ ແລະ ມະນຸດສຳພັນ;<br>5) ຫຼັກການຈັນຍາບັນຂອງທັນຕະແພດ. | 10/100 |
| 2 | ວິທະຍາສາດພື້ນຖານດ້ານທັນຕະກຳ (ເອກະສານຊ້ອນທ້າຍ 2) | 1) ຈັດຕັ້ງເປັນ 1 ຮອບ /2 ເດືອນ, ໝູນວຽນໄປເປັນຮອບໃໝ່ ພາຍຫຼັງຄົບ 2 ເດືອນ;<br>2) ກວດຄົນເຈັບ, ບົ່ງມະຕິພະຍາດ, ສັ່ງກວດເພີ່ມ ພ້ອມອ່ານຜົນ ແລະ ກວດພິເສດອື່ນໆ ເພື່ອບົ່ງມະຕິພະຍາດຢູ່ບໍລິເວນຜົ້ງປາກ, ຄໍ, ຄາງກະໄຕ ແລະ ໃບ ໜ້າ;<br>3) ຫຼັງຄົບຮອບ , ປະເມີນຄວາມຮູ້ຄວາມສາມາດຂອງຜູ້ຝຶກຫັດງານ , ຊຶ່ງມີຜູ້ກຳກັບດ້ານຄລີນິກເຂົ້າຮ່ວມການປະເມີນ . | 16/100 |
| 3 | ທັນຕະກຳເດັກ (ເອກະສານຊ້ອນທ້າຍ 3) | 1)ຈັດຕັ້ງເປັນ 1 ຮອບ /2 ເດືອນ, ໝູນວຽນໄປເປັນຮອບໃໝ່ ພາຍຫຼັງຄົບ 2 ເດືອນ;<br>2)ວິຊາສະເພາະ: ກວດຄົນເຈັບ, ບົ່ງມະຕິພະຍາດ, ກຳນົດບັນຫາ ແລະ ອາການສົນຂອງພະຍາດໃນຜົ້ງປາກຂອງເດັກ, ບົ່ງບອກໃນການເຮັດສົນລະຍະກຳຜົ້ງປາກ , ວາງແຜນການປິ່ນປົວ ແລະ ອາການສົນຂອງພະຍາດແຂ້ວແມງໃນຜົ້ງປາກ, ຄວາມສຳຄັນຂອງ ວຽກທັນຕະກຳຊຸມຊົນ;<br>3)ຫຼັງຄົບຮອບ , ປະເມີນຄວາມຮູ້ຄວາມສາມາດຂອງຜູ້ຝຶກຫັດງານ, ຊຶ່ງມີຜູ້ກຳກັບດ້ານຄລີນິກເຂົ້າຮ່ວມການປະເມີນ . | 16/100 |

| | | | |
|---|---|---|---|
| 4 | ທັນຕະກຳບູລະນະ (ເອກະສານຊ້ອນທ້າຍ 4) | 1) ຈັດຕັ້ງເປັນ 1 ຮອບ /2 ເດືອນ, ໝູນວຽນໄປເປັນຮອບໃໝ່ພາຍຫຼັງຄົບ 2 ເດືອນ;<br>2)ວິຊາສະເພາະ: ກວດຄົນເຈັບ ແລະ ສາມາດບົ່ງມະຕິດ້ານທັນຕະກຳຫັດຖະການ ,ປະຕິບັດຫຼັກການດັດແປງຜົ້ງແມງ ,ບັນຫາທີ່ເກີດຂຶ້ນໃນຫ້ອງນອນແຂ້ວ, ຮູຮາກແຂ້ວຊະນິດທີ່ພົບເຫັນ ເລື້ອຍໆ, ນຳໃຊ້ຢາປິ່ນປົວ ແລະ ໃຫ້ການປິ່ນປົວຕາມກຳລະນີ, ໃຫ້ການບູລະນະຕົ້ນແຂ້ວ ຕາມກໍລະນີຢ່າງເໝາະສົມ,ສາມາດບົ່ງມະຕິທີ່ເກີດຈາກພະຍາດປະຣິທັນ ແລະ ວາງແຜນການປິ່ນປົວ ແລະ ອະທິບາຍໃຫ້ຄົນເຈັບໄດ້ ;<br>3)ຫຼັງຄົບຮອບ , ປະເມີນຄວາມຮູ້ຄວາມສາມາດຂອງຜູ້ຝຶກຫັດງານ, ຊຶ່ງມີຜູ້ກຳກັບດ້ານຄລີນິກເຂົ້າຮ່ວມການປະເມີນ. | 16/100 |
| 5 | ສັນລະຍະກຳຜົ້ງປາກ (ເອກະສານຊ້ອນທ້າຍ 5) | 1) ຈັດຕັ້ງເປັນ 1 ຮອບ/2 ເດືອນ , ໝູນວຽນໄປເປັນຮອບໃໝ່ພາຍຫຼັງຄົບ 2 ເດືອນ;<br>2) ວິຊາສະເພາະ: ກວດຄົນເຈັບ, ບົ່ງມະຕິພະຍາດ, ຕ້ອງຮູ້ຂໍ້ບົ່ງບອກໃນການເຮັດສັນລະຍະກຳຜົ້ງປາກ, ກຳນົດໃຫ້ໄດ້ບັນຫາທາງສັນລະຍະກຳຜົ້ງປາກ, ອາການສົບ, ຢາ ແລະ ການປິ່ນປົວຕາມກຳລະນີກ່ອນ, ໃນເວລາ ແລະ ຫຼັງຜ່າຕັດ ໄດ້ຢ່າງເໝາະສົມ;<br>3) ຫຼັງຄົບຮອບ, ປະເມີນຄວາມຮູ້ຄວາມສາມາດຂອງຜູ້ຝຶກຫັດງານ, ຊຶ່ງມີຜູ້ກຳກັບດ້ານຄລີນິກເຂົ້າຮ່ວມການປະເມີນ . | 16/100 |
| 6 | ແຂ້ວທຽມວິທະຍາ (ເອກະສານຊ້ອນທ້າຍ 6) | 1) ຈັດຕັ້ງເປັນ 1 ຮອບ/2 ເດືອນ, ໝູນວຽນໄປເປັນຮອບໃໝ່ພາຍຫຼັງຄົບ 2 ເດືອນ ;<br>2) ວິຊາສະເພາະ: ສາມາດກຳນົດບັນຫາກ່ຽວກັບຊະນິດຂອງແຂ້ວທຽມ ພ້ອມທັງອາການສົບ, ຢາ ແລະ ວັດສະດຸກ່ຽວກັບແຂ້ວທຽມ ແລະ ແກ້ໄຂປິ່ນປົວຕາມກຳລະນີ ຢ່າງເໝາະສົມ;<br>3) ຫຼັງຄົບຮອບ ,ປະເມີນຄວາມຮູ້ຄວາມສາມາດຂອງຜູ້ຝຶກຫັດງານ, ຊຶ່ງມີຜູ້ກຳກັບດ້ານຄລີນິກເຂົ້າຮ່ວມການປະເມີນ . | 16/100 |
| 7 | ວຽກເສີມ: ວຽກງານການບໍລິການສັງຄົມອື່ນໆ. (ເອກະສານຊ້ອນທ້າຍ 7) | 1) ໄລຍະເວລາ: 1 ເດືອນ;<br>2) ວຽກຊຸມຊົນ:ສາມາດກຳນົດສາເຫດ, ປັດໃຈສ່ຽງ, ການບໍລິຫານ, ການສົ່ງເສີມສຸຂະພາບ ແລະ ປ້ອງກັນພະຍາດໃນຜົ້ງປາກຕາມກຳລະນີໄດ້ຢ່າງເໝາະສົມ;<br>3) ວຽກງານບໍລິການສັງຄົມ. | 10/100 |

| | | | |
|---|---|---|---|
| 8 | ການຂຽນບົດສະຫຼຸບລາຍງານທາງດ້ານວິຊາການ ໂດຍອ່ານຜ່ານຜູ້ຮັບຜິດຊອບການຝຶກຫັດງານດ້ານຄລີນິກ ແລະ ຜູ້ ອຳນວຍການໂຮງໝໍ. | 1) ໄລຍະເວລາ 2 ອາທິດ, ນັບທັງມື້ຈັດການຜ່ານການຝຶກຫັດງານ;<br>2) ສະຫຼຸບສັງລວມໜ້າວຽກຂອງ 5 ວິຊາຫຼັກ: ວິທະຍາສາດພື້ນຖານດ້ານທັນຕະກຳ , ທັນຕະກຳເດັກ, ທັນຕະກຳບູລະນະ, ສັນລະຍະກຳຜົ້ງປາກ , ແຂ້ວທຽມວິທະຍາ, ແລະ ວຽກເສີມ;<br>3) ຜູ້ຝຶກຫັດງານອ່ານຜ່ານ ມີການປະເມີນຜູ້ຝຶກຫັດງານ ໂດຍການເຂົ້າຮ່ວມຂອງຜູ້ກຳກັບດ້ານຄລີນິກ ແລະ ຜູ້ອຳນວຍການໂຮງໝໍ. | |
| 9 | ໂຮງໝໍແຂວງ-ໂຮງໝໍຊຸມຊົນເມືອງ | ສຳລັບໂຮງໝໍທີ່ບໍ່ໄດ້ຈັດສາຍວິຊາສະເພາະຕາມການຮຽນ, ທັນຕະແພດຝຶກຫັດງານ ຈະຕ້ອງປະເມີນ ສະຫຼຸບສັງລວມ ຄວາມຮູ້ຄວາມສາມາດ ໜ້າວຽກຂອງຕົນ ທີ່ໄດ້ປະຕິບັດ ຜ່ານມາ :<br>1) ການສົ່ງເສີມສຸຂະພາບຜົ້ງປາກ, ທັກສະໃນການສື່ສານ ມະນຸດສຳພັນ ແລະ ຫຼັກການຈັນຍາບັນຂອງທັນຕະແພດ;<br>2) 5 ວິຊາຫຼັກ/ໜ່ວຍງານທັນຕະກຳ: ວິທະຍາສາດພື້ນຖານດ້ານທັນຕະກຳ ,ທັນຕະກຳເດັກ, ທັນ ຕະກຳບູລະນະ, ສັນລະຍະກຳຜົ້ງປາກ, ແຂ້ວທຽມວິທະຍາ ແລະ ວຽກເສີມ, ມີການປະເມີນຜູ້ຝຶກຫັດງານ ຊຶ່ງມີຜູ້ກຳກັບດ້ານຄລີນິກເຂົ້າຮ່ວມ ແລະ ຜູ້ອຳນວຍການໂຮງໝໍ. | |
| | ຄະແນນລວມ ຜ່ານ ( 1+2+3+4+5+6+7 ) > 80 - 100/100 | | 80 - 100/100 |

ນະຄອນຫຼວງວຽງຈັນ , ວັນທີ : 27 ກັນຍາ (9) 2023

**ເຊັນແທນ** ປະທານ ສະພາຄຸ້ມຄອງວິຊາຊີບປິ່ນປົວ

ສຈ ດຣ ຈັນເພັງ ທຳມະວົງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

## ເອກະສານຊ້ອນທ້າຍ 1

### ຂະບວນການຮຽນຮູ້ ລະບົບບໍລິຫານວຽກງານສາທາລະນະສຸກ, ການສົ່ງເສີມສຸຂະພາບ ແລະ ວຽກງານການບໍລິການສັງຄົມອື່ນໆ

| ລ/ດ | ໜ້າວຽກເຄື່ອນໄຫວ |
|---|---|
| 1 | ທັກສະໃນການສື່ສານ ແລະ ຄວາມມີມະນຸດສຳພັນ (Communication and interpersonal skills) :<br><br>1) ການສະເໜີຕົວ , ຮຽນຮູ້ການຈັດຕັ້ງ ,ຂອບເຂດການປະຕິບັດງານຂອງການຈັດຕັ້ງ;<br>2) ສື່ສານກັບຄົນເຈັບ ເພື່ອນຮ່ວມອາຊີບ ແລະ ພະນັກງານສັງຄົມພາຍນອກ;<br>3) ຮູ້ ແລະ ນຳພາວຽກທັນຕະກຳ ແລະ ວຽກງານການບໍລິການສັງຄົມອື່ນໆ;<br>4)ທັກສະໃນການສື່ສານ, ມີມະນຸດສຳພັນ ແລະ ຫຼັກການຈັນຍາບັນ ຂອງທັນຕະແພດ;<br>5) ນຳໃຊ້ຫຼັກການດ້ານສັງຄົມ-ຈິດຕະສາດ ເຂົ້າໃນການປິ່ນປົວ. |
| 2 | ຫຼັກການຈັນຍາບັນທັນຕະແພດມີດັ່ງລຸ່ມນີ້:<br>1) ຕ້ອງຖືວ່າກຽດສັກສີຢູ່ເໜືອຜົນປະໂຫຍດ;<br>2) ຄົນມີຄ່າເໜືອວັດຖຸ;<br>3) ບໍ່ຖືວ່າຄົນເຈັບເປັນໂອກາດໃຫ້ທົດລອງ;<br>4) ຮັກສາຄວາມລັບຂອງຄົນເຈັບ;<br>5) ຕ້ອງຮ່ວມມືກັບທັນຕະແພດດ້ວຍກັນ;<br>6) ໃຫ້ຢາປິ່ນປົວທີ່ແນ່ໃຈວ່າມີປະໂຫຍດແກ່ຄົນເຈັບ ;<br>7) ຕ້ອງງົດເວັ້ນອະບາຍຍະມຸກທຸກຢ່າງໃນເວລາປະຕິບັດໜ້າທີ່. |

ແຫຼ່ງຂໍ້ມູນ: ຂີດຄວາມສາມາດຂອງທັນຕະແພດ ຢູ່ ສ ປ ປ ລາວ ທີ່ກຳນົດໄວ້ໃນຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງສາທາລະນະສາທາລະນະສຸກ ສະບັບເລກທີ 0214/ສທ ລົງວັນທີ 18 ກຸມພາ (2) 2018 .

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເອກະສານຊ້ອນທ້າຍ 2 : ວິຊາວິທະຍາສາດພື້ນຖານດ້ານທັນຕະກຳ

| ລ/ດ | ໜ້າວຽກເຄື່ອນໄຫວ |
| --- | --- |
| 1 | ອາຍຸລະສາດຜົ້ງປາກ:<br>ທັນຕະແພດຕ້ອງຮູ້ ວິທີການກວດຄົນເຈັບ, ກວດເພີ່ມ, ການບົ່ງມະຕິ ແລະ ການປິ່ນປົວສະພາບຄວາມຜິດປົກກະຕິ ຫຼື ການເປັນພະຍາດຢູ່ບໍລິເວນຜົ້ງປາກ ແລະ ໃບໜ້າ. |
| 2 | ໜ້າວຽກ ຜູ້ຝຶກຫັດ ງານຕ້ອງໄດ້ປະຕິບັດ:<br>1) ກວດຄົນເຈັບ, ບົ່ງມະຕິພະຍາດ, ສັ່ງກວດເພີ່ມ ພ້ອມອ່ານຜົນ ແລະ ກວດພິ ເສດອື່ນໆ ເພື່ອບົ່ງມະຕິພະຍາດຢູ່ບໍລິເວນຜົ້ງປາກ, ຄໍ, ຄາງກະໄຕ ແລະ ໃບ ໜ້າ;<br>2) ກວດ ແລະ ປິ່ນປົວທັນຕະພະຍາດ ອັກເສບຊຶມເຊື້ອໃນຜົ້ງປາກ, ຄໍ, ຄາງກະ ໄຕ ແລະ ໃບໜ້າ ( ແກ້ໄຂເບື້ອງຕົ້ນ/ສຸກເສີນ ຫຼື ສົ່ງຕໍ່ ) ;<br>3) ພະຍາດເນື້ອງອກ ແລະ ຮອຍບາດແຜຢູ່ໃນຜົ້ງປາກ ( ບົ່ງມະຕິ ແລະ ການບໍລິ ຫານຈັດການ );<br>4) ກວດຕ່ອມນໍ້າລາຍ, ກວດໝາກເບີກ ແລະ ລູກໜູຢູ່ບໍລິເວນຜົ້ງປາກ;<br>5) ຄວາມຜິດປົກກະຕິຂອງແຂ້ວ, ກະດູກຄາງ ແລະ ຈີວະ ຫຼື ເນື້ອເຍື່ອອ່ອນຢູ່ບໍລິ ເວນຜົ້ງປາກ ;<br>6) ການຕັດສິ້ນສ່ວນເພື່ອເຮັດ biopsy, ເກັບຕົວຢ່າງ ( ໜອງ, ເລືອດ, ເນື້ອເຍື່ອ, ນໍ້າລາຍ ແລະ ອື່ນໆ ) ຂອງພະຍາດທີ່ເກີດຂຶ້ນໃນຜົ້ງປາກ ;<br>7) ການຖ່າຍພາບລັງສີ , ການແປຜົນພາບລັງສີໃນບໍລິເວນຜົ້ງປາກ ,ແລະ ໃບໜ້າ;<br>8) ປິ່ນປົວແກ້ໄຂຄວາມເຈັບປວດຈາກແຂ້ວ ແລະ ພະຍາດເນື້ອເຍື່ອອ່ອນໃນຜົ້ງ ປາກດ້ວຍການໃຊ້ຢາ;<br>9) ຮູ້ບົ່ງມະຕິ ແລະ ປິ່ນປົວຄວາມເຈັບປວດທີ່ເກີດຂຶ້ນໃນບໍລິເວນຜົ້ງປາກ ແລະ ໃບໜ້າຈາກສາເຫດອື່ນໆ ( ການເຈັບເສັ້ນປະສາດໃບໜ້າ ) ;<br>10) ແກ້ໄຂສຸກເສີນຄວາມເຈັບປວດຈາກແຂ້ວ ແລະ ອື່ນໆ ;<br>11)ການກວດ, ບົ່ງມະຕິ ແລະ ບໍລິຫານຈັດການກ່ຽວກັບການກະທົບຢູ່ບໍລິເວນ ຜົ້ງປາກ ແລະ ໃບໜ້າ. |

ແຫຼ່ງຂໍ້ມູນ: ຂີດຄວາມສາມາດຂອງທັນຕະແພດ ຢູ່ ສ ປ ປ ລາວ ທີ່ກຳນົດໄວ້ໃນຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງສາທາລະນະສາທາລະນະສຸກ ສະບັບເລກທີ 0214/ສທ ລົງວັນທີ 18 ກຸມພາ (2) 2018 .

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເອກະສານຊ້ອນທ້າຍ 3 : ວິຊາທັນຕະກຳເດັກ

| ລ/ດ | ໜ້າວຽກເຄື່ອນໄຫວຄວນປະຕິບັດໃຫ້ໄດ້ |
|---|---|
| 1 | ສັນລະຍະກຳພື້ງປາກໃນເດັກ:<br>- ບົ່ງບອກໃນການເຮັດສັນລະຍະກຳພື້ງປາກ ກຳນົດໃຫ້ໄດ້ບັນຫາທາງສັນລະຍະກຳພື້ງປາກ ແລະ ກຳນົດອາການສົນຂອງການຜ່າຕັດພື້ງປາກ;<br>- ນຳໃຊ້ເຄື່ອງມື, ຢາປິ່ນປົວພະຍາດໃນທາງສັນລະຍະກຳພື້ງປາກ ແລະ ການປິ່ນປົວຕາມກໍລະນີກ່ອນ, ໃນເວລາປິ່ນປົວ ແລະ ຫຼັງຜ່າຕັດໄດ້ຢ່າງເໝາະສົມ ເພື່ອແກ້ໄຂອາການສົນໃນເວລາ ແລະ ຫຼັງການຖອນແຂ້ວ. |
| 2 | ທັນຕະກຳບູລະນະໃນເດັກ:<br>- ກວດ ແລະ ບົ່ງມະຕິພະຍາດພະຍາດແຂ້ວແມງໃນພື້ງປາກ: ກຳນົດບັນຫາ, ວາງແຜນການປິ່ນປົວ ແລະ ອາການສົນຂອງພະຍາດແຂ້ວແມງໃນພື້ງປາກ ;<br>- ການບົ່ງ-ຈຳແນກການປ່ຽນຖ່າຍຂອງແຂ້ວ, ການຜິດປົກກະຕິຂອງແຂ້ວນ້ຳນົມ ແລະ ແຂ້ວຖາວອນ, ແຂ້ວແມງ, ແຂ້ວຖືກກະທົບ, ບາດແຜທີ່ເກີດຈາກສາຍເຫດຕ່າງໆ, ແລະ ຄວບຄຸມພຶດຕິກຳໄດ້ຢ່າງເໝາະສົມ;<br>- ການແກ້ໄຂ, ການປິ່ນປົວ ແລະ ການໃຊ້ຢາປິ່ນປົວ. |
| 3 | ການສົ່ງເສີມປ້ອງກັນສຸຂະພາບພື້ງປາກ ແລະ ແຂ້ວ :<br>ຄວາມສຳຄັນຂອງວຽກສາທາລະນະສຸກຊຸມຊົນ, ການພັດທະນາຊຸມຊົນ, ການບົ່ງມະຕິຊຸມຊົນ, ການມີສ່ວນຮ່ວມຂອງຊຸມຊົນ, ການເຮັດວຽກເປັນທີມງານ ,ແລະ ການຂຽນບົດລາຍງານການບົ່ງມະຕິຊຸມຊົນ. |

ແຫຼ່ງຂໍ້ມູນ : ຂີດຄວາມສາມາດຂອງທັນຕະແພດ ຢູ່ ສ ປ ປ ລາວ ທີ່ກຳນົດໄວ້ໃນຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງສາທາລະນະສາທາລະນະສຸກ ສະບັບເລກທີ 0214/ສທ ລົງວັນທີ 18 ກຸມພາ (2) 2018 .

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເອກະສານຊ້ອນທ້າຍ 4 : ວິຊາທັນຕະກຳບູລະນະ

| ລ/ດ | ໜ້າວຽກເຄື່ອນໄຫວ |
|---|---|
| 1 | ວຽກ ທັນຕະກຳຫັດຖະການ :<br>1) ກວດຄົນເຈັບ ແລະ ສາມາດບົ່ງມະຕິດ້ານທັນຕະກຳຫັດຖະການ;<br>2) ສາມາດປະຕິບັດຫຼັກການກັດແປງຜີ້ງແມງ;<br>3) ສາມາດວາງແຜນປິ່ນປົວແຂ້ວແມງເຄືອບແຂ້ວ ແລະ ແມງເນື້ອແຂ້ວ ແລະ ອະທິບາຍໃຫ້ຄົນເຈັບໄດ້ ;<br>4) ນຳໃຊ້ເຄື່ອງມືວັດສະດຸ ແລະ ຢາ ທີ່ໃຊ້ໃນການອັດແຂ້ວ ;<br>5) ສາມາດແປງຜີ້ງແມງ ແລະ ການປົກປ້ອງນອນແຂ້ວ;<br>6) ສາມາດບູລະນະດ້ວຍ Resin composite;<br>7) ສາມາດແນະນຳການຮັກສາສຸຂະພາບປາກ ແລະ ແຂ້ວ ພາຍຫຼັງການປິ່ນປົວ. |
| 2 | ວຽກ ປິ່ນປົວຮູຮາກແຂ້ວ (Endodontics):<br>1) ກວດຄົນເຈັບ ແລະ ສາມາດບົ່ງມະຕິພະຍາດນອນແຂ້ວ-ພະຍາດອະໄວຍະວະອ້ອມປາຍຮາກແຂ້ວທີ່ເກີດຈາກພະຍາດແຂ້ວແມງ ;<br>2) ສາມາດວາງແຜນການປິ່ນປົວ ແລະ ອະທິບາຍໃຫ້ຄົນເຈັບໄດ້ ;<br>3) ນຳໃຊ້ ຫຼັກການ ເຕັກນິກ ແລະ ເປົ້າໝາຍການປິ່ນປົວຮູຮາກແຂ້ວ;<br>4) ນຳໃຊ້ ເຄື່ອງມື, ວັດສະດຸ ແລະ ຢາທີ່ໃຊ້ໃນການປິ່ນປົວຮູຮາກ;<br>5) ສາມາດປະຕິບັດຂັ້ນຕອນໃນການປິ່ນປົວຮູຮາກແຂ້ວດ້ວຍເຕັກນິກຕ່າງໆ;<br>6) ສາມາດການຕົບແຕ່ງສ້າງຕົ້ນແຂ້ວຄືນໃໝ່ພາຍຫຼັງປິ່ນປົວຮູຮາກແຂ້ວ;<br>7) ຕິດຕາມອາການຄົນເຈັບ ແລະ ການແກ້ໄຂບັນຫາທີ່ເກີດຂຶ້ນໃນຄະນະທີ່ໃຫ້ການປິ່ນປົວຮູຮາກແຂ້ວ;<br>8) ສາມາດໃຫ້ການປິ່ນປົວຜູ້ສູງອາຍຸ, ແກ້ໄຂສຸກເສີນ ແລະ ແຂ້ວທີ່ຖືກກະທົບ;<br>9) ສາມາດແນະນຳການຮັກສາສຸຂພາບປາກ ແລະ ແຂ້ວ ພາຍຫຼັງການປິ່ນປົວ. |
| 3 | ວຽກ ປະຣິທັນວິທະຍາ:<br>1) ກວດຄົນເຈັບ ແລະ ສາມາດບົ່ງມະຕິທີ່ເກີດຈາກພະຍາດປະຣິທັນ ;<br>2) ສາມາດວາງແຜນການປິ່ນປົວ ແລະ ອະທິບາຍໃຫ້ຄົນເຈັບໄດ້ ;<br>3) ສາມາດປະຕິບັດ ຫຼັກການ ແລະ ເປົ້າໝາຍການປິ່ນປົວປະຣິທັນ;<br>4) ນຳໃຊ້ເຄື່ອງມື, ວັດສະດຸ ແລະ ຢາ ທີ່ໃຊ້ໃນການປິ່ນປົວປະຣິທັນ;<br>5) ສາມາດປະຕິບັດຂັ້ນຕອນໃນການປິ່ນປົວພະຍາດປະຣິທັນ ດ້ວຍມື (Hand Scaler) ຫຼື ເຄື່ອງຂູດຫີນປູນໄຟຟ້າ (Ultrasonic Scaler) ;<br>6) ຕິດຕາມອາການຄົນເຈັບ ແລະ ການແກ້ໄຂບັນຫາໃນການປິ່ນປົວປະຣິທັນ;<br>7) ສາມາດແນະນຳການຮັກສາສຸຂະພາບປາກ-ແຂ້ວ ພາຍຫຼັງການປິ່ນປົວ. |

ແຫຼ່ງຂໍ້ມູນ: ຂີດຄວາມສາມາດຂອງທັນຕະແພດ ຢູ່ ສ ປ ປ ລາວ ທີ່ກຳນົດໄວ້ໃນຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງສາທາລະນະສາທາລະນະສຸກ ສະບັບເລກທີ 0214/ສທ ລົງວັນທີ 18 ກຸມພາ (2) 2018 .

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເອກະສານຊ້ອນທ້າຍ 5 : ວິຊາສັນລະຍະກຳຜົ້ງປາກ

| ລ/ດ | ໜ້າວຽກເຄື່ອນໄຫວ |
|---|---|
| 1 | ສັນລະຍະກຳຜົ້ງປາກ:<br>ທັນຕະແພດຕ້ອງຮູ້ ຂໍ້ບົ່ງບອກໃນການເຮັດສັນລະຍະກຳຜົ້ງປາກ ກຳນົດໃຫ້ໄດ້ບັນຫາທາງສັນລະຍະກຳຜົ້ງປາກ, ອາການສົນ, ການນຳໃຊ້ຢາ ແລະ ການປິ່ນປົວຕາມກຳລະນີ ກ່ອນ, ໃນເວລາ, ຫຼັງຜ່າຕັດໄດ້ຢ່າງເໝາະສົມ. |
| 2 | ໜ້າວຽກທີ່ທັນຕະແພດຝຶກຫັດງານຕ້ອງຮູ້ ແລະ ປະຕິບັດມີດັ່ງນີ້:<br>1) ການກວດ, ສອບຖາມປະຫວັດຄົນເຈັບ, ການສັ່ງກວດເພີ່ມເຕີມ ແລະ ອ່ານຜົນເພື່ອບົ່ງມະຕິລວມທັງການຄາດຄະເນພະຍາດຢູ່ບໍລິເວນຜົ້ງປາກຄາງກະໄຕ ແລະ ໃບໜ້າ;<br>2) ຫຼັກການ ແລະ ຂະບວນການດຳເນີນການເຮັດວຽກງານສັນລະຍະກຳຜົ້ງປາກ;<br>3) ຂໍ້ບົ່ງຊີ້ ແລະ ຍົກເວັ້ນໃນການເຮັດວຽກງານສັນລະຍະກຳຜົ້ງປາກ;<br>4) ປະຕິບັດຫຼັກການປອດເຊື້ອ ແລະຕ້ານການຊຶມເຊື້ອ (Asepsis and antisepsis)ໄດ້ຢ່າງເຄັ່ງຄັດ;<br>5) ກຳນົດບັນຫາທາງສັນລະຍະກຳຜົ້ງປາກ, ອາການສົນ, ການໃຊ້ຢາປິ່ນປົວຕາມກຳລະນີ, ກ່ອນ, ໃນເວລາ ແລະ ຫຼັງການຜ່າຕັດໃຫ້ໄດ້ຢ່າງເໝາະສົມ;<br>6) ຮູ້ ແລະ ນຳໃຊ້ເຄື່ອງມື, ຢາປິ່ນປົວພະຍາດໃນທາງສັນລະຍະກຳຜົ້ງປາກ;<br>7) ແກ້ໄຂອາການສົນໃນເວລາ ແລະ ຫຼັງການຖອນແຂ້ວ ແລະ ສັນລະຍະກຳຜົ້ງປາກໃຫ້ໄດ້;<br>8) ການຫຍິບບາດແຜ, ການເຈາະລະບາຍໜອງ, ການຜ່າຕັດແຂ້ວຊະນິດຕ່າງໆ, ການເຮັດສັນລະຍະກຳເນື້ອເຍື່ອອ່ອນ ແລະ ເນື້ອເຍື່ອແຂງ ເພື່ອກຽມໃສ່ແຂ້ວທຽມ;<br>9) ຮູ້ບໍລິຫານຈັດການແກ້ໄຂການອັກເສບຊຶມເຊື້ອຢູ່ບໍລິເວນຜົ້ງປາກ ແລະ ໃບໜ້າໄດ້ຢ່າງເໝາະສົມ;<br>10) ຕັດເນື້ອເຍື່ອສົ່ງກວດ ແລະ ອ່ານຜົນໃຫ້ໄດ້;<br>11) ຮູ້ຈຳແນກກ້ອນເບົ້າ ແລະ ເນື້ອງອກຊະນິດຕ່າງໆໃນກະດູກຄາງກະໄຕໂດຍອາໄສຂໍ້ມູນອ້າງອີງ(ພາບລັງສີ, ຜົນກວດເລືອດ, ຜົນກວດເນື້ອເຍື່ອ.....);<br>12) ຮູ້ ແລະ ຈຳແນກເນື້ອງອກຮ້າຍແຮງ ແລະ ບໍ່ຮ້າຍແຮງໃຫ້ໄດ້;<br>13) ການຈັດແບ່ງ ແລະ ການແກ້ໄຂການກະທົບຢູ່ບໍລິເວນຄາງກະໄຕ ແລະ ໃບໜ້າ;<br>14) ການປະເມີນບາດແຜກະທົບຢູ່ຫົວ, ຄໍ, ຄາງກະໄຕ ແລະ ໃບໜ້າ;<br>15) ຮູ້ຈັກປະເພດ ແລະ ຫຼັກການແກ້ໄຂຄວາມຜິດປົກກະຕິສົບແວ່ງ-ເພດານໂວ່;<br>16) ກວດ ແລະປະເມີນ/ບົ່ງມະຕິຄວາມຜິດປົກກະຕິຂອງຂໍ້ຕໍ່ຄາງກະໄຕ. |

ແຫຼ່ງຂໍ້ມູນ: ຂີດຄວາມສາມາດຂອງທັນຕະແພດ ຢູ່ ສ ປ ປ ລາວ ທີ່ກຳນົດໄວ້ໃນຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງສາທາລະນະສາທາລະນະສຸກ ສະບັບເລກທີ 0214/ສທ ລົງວັນທີ 18 ກຸມພາ (2) 2018 .

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເອກະສານຊ້ອນທ້າຍ 6 : ວິຊາແຂ້ວທຽມວິທະຍາ

| ລ/ດ | ໜ້າວຽກເຄື່ອນໄຫວ |
|---|---|
| 1 | ແຂ້ວທຽມວິທະຍາ:<br>ຕ້ອງສາມາດກວດປິ່ງມະຕິພື້ງປາກຂອງຄົນເຈັບທີ່ຂາດແຂ້ວ, ຈັດປະເພດການຂາດແຂ້ວ, ການພົວພັນກັບຂະແໜງການອື່ນໆ  ເພື່ອກະກຽມການໃສ່ແຂ້ວທຽມ: ຂະແໜງສັນຍະກຳ, ບູລະນະ, ລັງສີ, ກຳນົດບັນຫາກ່ຽວກັບ ແລະ ຊະນິດຂອງແຂ້ວທຽມ ພ້ອມທັງອາການສົບ,  ຢາ, ວັດສະດຸກ່ຽວກັບແຂ້ວທຽມ ແລະ ແກ້ໄຂປິ່ນປົວຕາມກໍລະນີ ໄດ້ຢ່າງເໝາະສົມ. |
| 2 | ແຂ້ວທຽມພາກສ່ວນຖອດໄດ້:<br>ການວາງແຜນໃສ່ແຂ້ວທຽມຖອດໄດ້, ຫຼັກການໃນການເຮັດແຂ້ວຖອດໄດ້, ອົງປະກອບ ຫຼື ສ່ວນຕ່າງໆຂອງແຂ້ວທຽມຊະນິດຖອດໄດ້, ການອອກແບບໃນການເຮັດແຂ້ວຊະນິດຖອດໄດ້, ຂັ້ນຕອນໃນຄລີນິກຂອງການເຮັດແຂ້ມທຽມຊະນິດຖອດໄດ້. |
| 3 | ແຂ້ວທຽມໝົດປາກ ຫຼື ແຂ້ວທຽມຄົບຊຸດ:<br>ຫຼັກການໃນການໃສ່ແຂ້ວທຽມໝົດປາກ, ຂັ້ນຕອນໃນການເຮັດແຂ້ວທຽມໝົດປາກ, ການບົວ ລະບັດຮັກສາ ແລະ ທຳຄວາມສະອາດແຂ້ວທຽມໝົດປາກ, ການແກ້ໄຂບັນຫາຂອງແຂ້ວທຽມໝົດປາກ, ການເຮັດ(ໃສ່) ແຂ້ວທຽມແບບຮີບດ່ວນ, ແຂ້ວທຽມທັບຮາກ (over dentures) |
| 4 | ແຂ້ວໂບກ ແລະ ແຂ້ວຂົວ (Crown and bridge):<br>ຫຼັກການໃສ່ແຂ້ວໂບກ ແລະ ແຂ້ວຂົວ, ການວາງແຜນເຮັດແຂ້ວໂບກ ແລະ ແຂ້ວຂົວ, ການຕຽມຕໍເຮັດແຂ້ວໂບກ ແລະແຂ້ວຂົວຊະນິດຕ່າງໆ, Post and core, ຂັ້ນຕອນໃນຄລີນິກ ຂອງການເຮັດແຂ້ວໂບກ-ແຂ້ວຂົວ, ແຂ້ວໂບກຊົ່ວຄາວແລະ ແຂ້ວຂົວຊົ່ວຄາວ. |
| 5 | ວັດສະດຸທີ່ໃຊ້ເຮັດແຂ້ວທຽມ (Dental material in prosthodontics):<br>ວັດສະດຸພິມປາກ, ການເຜົາ ແລະ ຫຼໍ່ໂລຫະ, ເຊຣາມິກ (Ceramic), ອາຄຼີລິກ (Acrylic), ຜະລິດຕະພັນຫຼໍ່ແບບ, ເຫືອກອ່ອນ. |
| 6 | ຄວາມສາມາດທາງດ້ານການດັດແປງແຂ້ວ:<br>ການປະເມີນການທາງດ້ານດັດແປງແຂ້ວ  ,ການຈັດແບ່ງທ່າທຍ້ຳທີ່ຜິດປົກກະຕິ,  ການວາງແຜນປິ່ນປົວແກ້ໄຂ,  ການຈັດການກັບການປີ້ງຂອງແຂ້ວ ແລະ ການຖອນແຂ້ວເພື່ອການດັດແປງ. |
| 7 | ຄາງກະໄຕໃບໜ້າທຽມ, ຕາທຽມ, ຫູທຽມ, ດັງທຽມ, ປາກແຫວ່ງເພດານໂວ່. |

**ແຫຼ່ງຂໍ້ມູນ:** ຂີດຄວາມສາມາດຂອງທັນຕະແພດ ຢູ່ ສ ປ ປ ລາວ ທີ່ກຳນົດໄວ້ໃນຂໍ້ຕົກລົງຂອງທ່ານລັດຖະມົນຕີ ກະຊວງສາທາລະນະສາທາລະນະສຸກ ສະບັບເລກທີ 0214/ສທ ລົງວັນທີ 18 ກຸມພາ (2) 2018

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເອກະສານຊ້ອນທ້າຍ 7

ວຽກເສີມ (ຮູ້ວຽກສົ່ງເສີມສຸຂະພາບທົ່ວໄປ ແລະ ວຽກງານການບໍລິການສັງຄົມອື່ນໆ)

| ລ/ດ | ໜ້າວຽກເຄື່ອນໄຫວ |
|---|---|
| 1 | ວຽກສົ່ງເສີມສຸຂະພາບ :<br>1) ໃຫ້ການສົ່ງເສີມສຸຂະພາບທົ່ວ ແລະ ປ້ອງກັນພະຍາດ ( Health Promotion and Prevention) ;<br>2) ປະກອບສ່ວນກັບທີມງານທັນ ຕະກຳ ແລະ ພະນັກງານອາຊີບສາທາລະນະສຸກອື່ນໆ ໃນການບໍລິຫານ ແລະ ສົ່ງເສີມສຸຂະ ພາບ;<br>3) ຮັບຮູ້ ແລະ ຍອມຮັບຄວາມຈຳເປັນໃນການປະກອບສ່ວນປິ່ນປົວແບບພື້ນເມືອງ ເພື່ອປັບປຸງສຸຂະພາບຜົ້ງປາກ ແລະ ແຂ້ວ;<br>4) ໃຫ້ທັນຕະສຸຂະສຶກສາແກ່ຄົນເຈັບ ແລະ ຊຸມຊົນຢ່າງກ້ວາງຂວາງ; |
| 2 | ການບໍລິການ ແລະ ຂໍ້ມູນຂ່າວສານ:<br>1) ເກັບມ້ຽນເອກະ ສານບົດບັນທຶກ ແລະ ເອກສານຄົນເຈັບ;<br>2) ປະສານສົມທົບ ການສົ່ງເສີມສຸຂະພາບ ;<br>3) ບໍລິຫານຈັດການບໍລິການ ດ້ານທັນຕະກຳຢ່າງມີປະສິດທິຜົນ ດ້ວຍການຂຶ້ນຕາຕະລາງ, ເກັບເອກະສານຂໍ້ມູນບັນທຶກ ;<br>4) ປະຕິບັດການຄວບຄຸມການແຜ່ເຊື້ອ ແລະ ຮັກສາສິ່ງແວດລ້ອມຕາມມາດຕະຖານ;<br>5) ປະຕິບັດໜ້າມີ່ຕາມຄວາມຮັບຜິດຊອບຂອງຕົນ ແລະ ຂໍຄຳປຶກສາ ຫຼື ສົ່ງຕໍ່ຄົນເຈັບໃຫ້ເພື່ອນຮ່ວມວິຊາຊີບ ສະເພາະ. |

ແຫຼ່ງຂໍ້ມູນ: ຂີດຄວາມສາມາດຂອງທັນຕະແພດ ຢູ່ ສ ປ ປ ລາວ ທີ່ກຳນົດໄວ້ໃນຂໍ້ຕົກລົງຂອງທ່ານ ລັດຖະມົນຕີ ກະຊວງ ສາທາລະນະສາທາລະນະສຸກ ສະບັບເລກທີ 0214/ສທ ລົງວັນທີ 18 ກຸມພາ (2) 2018 .

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກສາທາລະນະສຸກແຂວງ.............

ໂຮງໝໍແຂວງ/ໂຮງໝໍຊຸມຊົນ ..... ເລກທີ /

## ໜັງສືແຕ່ງຕັ້ງຄູຝຶກນິກ

( ຕົວຢ່າງ )

ຜູ້ອຳນວຍການໂຮງໝໍແຂວງ/ໂຮງໝໍຊຸມຊົນ........................................ໄດ້ຕົກລົງແຕ່ງຕັ້ງ :
ທ່ານ ດຣ. .................................. ,ໜ້າທີ່ຮັບຜິດຊອບ ........................................................
ເປັນຄູຝຶກນິກ ສຳລັບ ທ່ານ ..................................ທັນຕະແພດຝຶກຫັດງານ ຮຸ່ນ ທີ ..... ປີ ..........ນັບແຕ່ວັນທີ
ເດືອນ ປີ ຫາ ວັນທີ ເດືອນ ປີ .
ດ້ວຍເຫດນີ້ຈຶ່ງໄດ້ຢັ້ງຢືນໃຫ້ຜູ່ກ່ຽວໃຊ້ເປັນຫຼັກຖານ.

ຜູ້ອຳນວຍການໂຮງໝໍແຂວງ/ໂຮງໝໍຊຸມຊົນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກສາທາລະນະສຸກແຂວງ

ໂຮງໝໍແຂວງ/ໂຮງໝໍຊຸມຊົນ ເລກທີ /

ທີ່ແຂວງ.................. ,ວັນທີ :

ສະໂໜດນຳສົ່ງ

ຮຽນ : ທ່ານ ປະທານສະພາຄຸ້ມຄອງວິຊາຊີບສາທາລະນະສຸກ - ກະຊວງສາທາລະນະສຸກ

ເລື້ອງ : ນຳສົ່ງລາຍຊື່ຄູຄຼີນິກສຳລັບທັນຕະແພດຝຶກຫັດງານ ປີ 202.....

ເອກະສານທີ່ນຳສົ່ງມາປະກອບມີ :

| ລ/ດ | ເນື້ອໃນຫຍໍ້ຂອງເອກະສານ | ຈຳນວນ | ໝາຍເຫດ |
|---|---|---|---|
| 1 | ນຳສົ່ງລາຍຊື່ຄູຄຼີນິກສຳລັບທັນຕະແພດຝຶກຫັດງານ ປີ 202…. | 1 ສະບັບ | ເພື່ອພິຈາລະນາການແຕ່ງຕັ້ງ. |

ຜູ້ອຳນວຍການ
ໂຮງໝໍແຂວງ/ໂຮງເມືອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກສາທາລະນະສຸກແຂວງ...................................

ໂຮງໝໍແຂວງ/ໂຮງໝໍຊຸມຊົນ.........................................

# ໃບຢັ້ງຢືນການໃຫ້ຄະແນນສໍາລັບການຝຶກຫັດງານ

(ຕົວຢ່າງ)

ຄະນະອໍານວຍການໂຮງໝໍແຂວງ/ໂຮງໝໍຊຸມຊົນ…...................................................................

ຂໍຢັ້ງຢືນວ່າ (ຊື່ ແລະ ນາມສະກຸນ): ທ້າວ/ນາງ..........................................................................

ທັນຕະແພດຝຶກຫັດງານລຸ້ນທີ .... (ປີ 202... ) ໄດ້ຜ່ານການຝຶກຫັດງານນໍາພວກເຮົາ ແຕ່ວັນທີ………/…..…/……….ເຖິງວັນທີ….…./…..../…………., ຊຶ່ງຜົນຄະແນນມີດັ່ງນີ້:

| ລ/ດ | ເນື້ອໃນການໃຫ້ຄະແນນ | ຄະແນນເຕັມ | ຄະແນນທີ່ໃຫ້ |
|---|---|---|---|
| 1 | ຂະບວນການຮຽນຮູ້ ລະບົບບໍລິຫານວຽກງານສາທາລະນະສຸກ, ການສົ່ງເສີມສຸຂະພາບ ແລະ ວຽກງານການບໍລິການສັງຄົມອື່ນໆ | 10/100 | |
| 2 | ວິທະຍາສາດພື້ນຖານດ້ານວິຊິບທັນຕະກໍາ | 16/100 | |
| 3 | ທັນຕະກໍາເດັກ (ປະເມີນຂີດຄວາມສາມາດດ້ານວິຊາຊີບ) | 16/100 | |
| 4 | ທັນຕະກໍາບູລະນະ (ປະເມີນຂີດຄວາມສາມາດດ້ານວິຊາຊີບ) | 16/100 | |
| 5 | ສັນລະຍະກໍາຜົ້ງປາກ (ປະເມີນຂີດຄວາມສາມາດດ້ານວິຊາຊີບ) | 16/100 | |
| 6 | ແຂ້ວທຽມວິທະຍາ (ປະເມີນຂີດຄວາມສາມາດດ້ານວິຊາຊີບ) | 16/100 | |
| 7 | ວຽກເສີມ: ວຽກງານການບໍລິການສັງຄົມອື່ນໆ | 10/100 | |
| ລວມ | | 80-100/100 | |

ທີ່ ໂຮງໝໍແຂວງ................................., ວັນທີ………/………/………….

**ຜູ້ອໍານວຍການໂຮງໝໍແຂວງ/ໂຮງໝໍຊຸມຊົນ** **ທັນຕະແພດຮັບຜິດຊອບການຝຶກງານ**

**( ຄູຝຶກ )**